# ສຄອ ແຫ່ງຊາດລາວ ສະເໜີ 8 ນະໂຍບາຍ ແລະ ມາດຕະການ ຕໍ່ລັດຖະບານ ເພື່ອຟື້ນຟູເສດຖະກິດ ຫຼັງ COVID-19

1. ການຟື້ນຟູເສດຖະກິດຈາກວິກິດການ COVID-19 ຮຽກຮ້ອງໃຫ້ລັດຖະບານໄດ້ວາງນະໂຍບາຍ ແລະ ມາດຕະການສະເພາະເພື່ອສ້າງໄມ້ງັດເສດຖະກິດ ໃນການຜະລິດໃນທຸກໆຂະແໜງການໄດ້ຜະລິດຄືນໃໝ່ໂດຍມີປະສິດທິພາບສູງກວ່າເກົ່າ. ການຟື້ນຟູເສດຖະກິດອາດໃຊ້ເວລາເຖິງ 28 ເດືອນ ຕາມສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ.

2. ສຄອ ແຫ່ງຊາດລາວ ສະເໜີໃຫ້ລັດຖະບານ ອອກນະໂຍບາຍ ແລະ ມາດຕະການເພື່ອແກ້ໄຂໃຫ້ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນມີສະພາບຄ່ອງ ໃນການສະໜອງທຶນກູ້ຢືມໃຫ້ແກ່ທຸລະກິດ ອັນສຳຄັນແມ່ນການຈັດຕັ້ງປະຕິບັດຄຳສັ່ງເລກທີ 238/ທຫລ ຂອງທະນາຄານແຫ່ງ ສປປ ລາວ ໃຫ້ເປັນເອກະພາບ. ມາດຕະການສະເພາະສຸກເສີນປະກອບດ້ວຍ ການຜ່ອນຜັນຂໍ້ກຳນົດຜ່ອນທຶນ, ການປ່ອຍເງິນກູ້ເປັນເງິນຕາຕ່າງປະເທດ, ການສ້າງກົນໄກສັບປ່ຽນສະກຸນເງິນຕາ, ການສ້າງກອງທຶນຄ້ຳປະກັນເງິນກູ້, ການປ່ອຍເງິນກູ້ສຸກເສີນໃຫ້ ສະຖາບັນການເງິນຈຸລະພາກ ແລະ ການປ່ອຍເງິນກູ້ຂອງກອງທຶນສົ່ງເສີມ SME.

3. ສຄອ ແຫ່ງຊາດລາວ ສະເໜີໃຫ້ມີການພັດທະນາການບໍລິການຮຸ້ນເອກະຊົນ ໂດຍການອະນຸຍາດສ້າງກອງທຶນຮຸ້ນເອກະຊົນ (Private Equity PE), ຜູ້ລົງທຶນໃນຮຸ້ນ (Venture Capital-VC) ແລະ ການບໍລິການອື່ນໆເພື່ອລະດົມທຶນເຂົ້າມາຟື້ນຟູເສດຖະກິດ.

4. ສຄອ ແຫ່ງຊາດລາວ ສະເໜີໃຫ້ລັດຖະບານພິຈາລະນາຂາຍຊັບສິນທີ່ບໍ່ໄດ້ນຳໃຊ້ ຫຼື ມີສະພາບບໍ່ຄ່ອຍດີປານໃດແລະການເກັບຊັບສິນທີ່ມີປະໂຫຍດແລະມີສະພາບດີໄວ້ຖ້າຜູ້ຊື້ຮຸ້ນຂອງວິສາຫະກິດຫາກແມ່ນນັກລົງທຶນທີ່ມີຄຸນນະພາບມັນຈະນຳຜົນປະໂຫຍດໃຫ້ແກ່ວິສາຫະກິດນັ້ນ ແລະ ສ້າງລາຍຮັບເຂົ້າງົບປະມານທີ່ແນ່ນອນ. ຂະບວນການຂາຍນັ້ນຕ້ອງໄດ້ປະຕິບັດມາດຕະຖານສາກົນ ດ້ານຄວາມໂປ່ງໃສ ແລະ ຍຸດຕິທຳ.

5. ເພື່ອສາມາດຟື້ນຟູການຜະລິດທຸລະກິດ ແລະ ເສດຖະກິດ, ສຄອ ແຫ່ງຊາດລາວ ໄດ້ຄຳນວນວ່າລັດຖະບານຄວນຈະຕ້ອງໄດ້ຈັດສັນທຶນຢ່າງຕ່ຳສຸດ 380 ລ້ານໂດລາສາຫາລັດຫຼື 2% ຂອງ GDP ປີ 2019 ເພື່ອນາເຖິງຂຸມການໃຊ້ຈ່າຍງົບປະມານ, ຈັດສັນໃຫ້ພາກທຸລະກິດຜະລິດຄືນໃໝ່ ແລະ ປະຕິບັດພັນທະຕໍ່ສັງຄົມທີ່ຖືກກະທົບ. ໃນນັ້ນຕ້ອງການໃຫ້ພາກທຸລະກິດຈຳນວນປະມານ 152 ລ້ານໂດລາສາຫາລັດ ຫຼື 40% ຂອງຈຳນວນເງິນທີ່ລະດົມມາ.

6. ເພື່ອຟື້ນຟູເສດຖະກິດ ແລະ ເພີ່ມທຶນໃຫ້ກັບພາກທຸລະກິດ, ສຄອ ແຫ່ງຊາດລາວ ສະເໜີໃຫ້ ລັດຖະບານອອກນະໂຍບາຍແລະມາດຕະການດ້ານພາສີອາກອນປະກອບດ້ວຍ ການຫຼຸດອາກອນມູນຄ່າເພີ່ມເປັນ 5% (ຫຼຸດລົງ 50%) ແລະ ຍົກເວັ້ນອາກອນກຳໄລ ໃຫ້ແກ່ຂະແໜງການທີ່ຖືກກະທົບຫຼາຍ ແລະ ເປັນບູລິມາສິດໃນໄລຍະ 28 ເດືອນ ນັບແຕ່ເດືອນ 7 ປີ 2020 ເປັນຕົ້ນໄປ.

7. ສະເໜີໃຫ້ລັດຖະບານສືບຕໍ່ປັບປຸງນະໂຍບາຍ ແລະ ວາງມາດຕະການເພື່ອປັບປຸງແວດລ້ອມທຸລະກິດໃຫ້ດີຂຶ້ນເຮັດໃຫ້ລະດັບການດຳເນີນທຸລະກິດໄດ້ຫຼຸດລົງຈາກທີ່ 154 ໂດຍສະເພາະແມ່ນການສືບຕໍ່ນຳໃຊ້ເວທີທຸລະກິດລາວ (LBF) ເປັນເວທີ ແລະ ເຄື່ອງມືໃນການແກ້ໄຂບັນຫາ ແລະ ຂໍ້ຈຳກັດຮ່ວມກັບພາກທຸລະກິດ. ສິ່ງສຳຄັນອີກຢ່າງໜຶ່ງແມ່ນການເພີ້ມທະວີການປະຕິບັດຄຳສັ່ງເລກທີ 02/ນຍ ແລະ ການຈັດຕັ້ງຄະນະປະສານງານພາກລັດ ແລະ ພາກທຸລະກິດເພື່ອຕິດຕາມປະເມີນຜົນການຈັດຕັ້ງປະຕິບັດມະຕິດັ່ງກ່າວ.

8. ສຄອ ແຫ່ງຊາດລາວ ຂໍສະໜັບສະໜູນໃຫ້ລັດຖະບານພິຈາລະນາເຂົ້າຮ່ວມໂຄງການຂອງ IMF ຍ້ອນເຫັນວ່າຈະເປັນການຊ່ວຍເຫຼືອແກ້ໄຂບັນຫາລະດັບມະຫາພາກເພື່ອການຟື້ນຟູ ແລະຂະຫຍາຍເສດຖະກິດຂອງ ສປປ ລາວ.